ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
********✧********

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ເລກທີ 130 /ຄຊກລ.ສຄ
ນະຄອນຫລວງວຽງຈັນ, ວັນທີ: 02 JUN 2017

# ບົດບັນທຶກ ກອງປະຊຸມກຸ່ມວິຊາການ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 02, 2017

ກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 02, 2017 ໄດ້ໄຂຂຶ້ນໃນວັນທີ 12 ເດືອນ ພຶດສະພາ ປີ 2017, ເວລາ 09:00 ຢູ່ທີ່ຫ້ອງປະຊຸມຂອງຫ້ອງການ ຄຊກລ ໂດຍການເປັນປະທານຂອງ ທ່ານ ບຸນພະມິດ ໂສມວິຈິດ ຮອງຫົວໜ້າຫ້ອງການ ຄຊກລ, ຜູ້ຊີ້ນຳວຽກງານປະຕິບັດງານ ໂດຍມີຕົວແທນຈາກອົງການປະຕິບັດງານ, ຄູ່ຮ່ວມງານຕ່າງໆ ລວມທັງພະນັກງານ ແລະ ວິຊາການຫ້ອງການ ຄຊກລ ເຂົ້າຮ່ວມຈຳນວນ: 19 ທ່ານ, ຍິງ: 05, ທ່ານ.

ໃນການກ່າວໄຂກອງປະຊຸມ, ທ່ານປະທານກອງປະຊຸມໄດ້ເນັ້ນໜັກເຖິງຈຸດປະສົງຂອງກອງປະຊຸມກຸ່ມວິຊາການ ແມ່ນກອງປະຊຸມ ເພື່ອແລກປ່ຽນສົນທະນາ, ປຶກສາຫາລືກ່ຽວກັບ ແນວທາງໃນການໂຄສະນາຜົນຮ້າຍຂອງ ລບຕ ໃຫ້ປະຊາຊົນເຂົ້າໃຈ ແລະ ສາມາດຫຼີກລ່ຽງ ການເກີດອຸປະຕິເຫດຈາກ ລບຕ.

ໃນກອງປະຊຸມ ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຫ້ອງການ ຄຊກລ ໄດ້ທົບທວນບົດບັນທຶກກອງປະຊຸມຄັ້ງທີ່ຜ່ານມາໂດຍຫຍໍ້ ພ້ອມກັບລາຍງານການເຄື່ອນໄຫວວຽກປະຈຳໄຕມາດ 02 ປີ 2017 ແລະ ແຜນຄາດຄະເນ ໃນໄຕມາດ 3 ປີ 2017 ເຊິ່ງໃນນີ້ແມ່ນຈະຊຸມໃສ່: ຊຸກຍູ້ກະຊວງ ຖວທ ຈັດລາຍການວິທະຍຸ ເພື່ອໂຄສະນາຜົນຮ້າຍຂອງ ລບຕ ໃນ 5 ແຂວງ (ແຂວງຄຳມ່ວນ, ສາລາວັນ, ເຊກອງ ແລະ ຈຳປາສັກ ແລະ ນະຄອນຫຼວງວຽງຈັນ), ຈັດກອງປະຊຸມກຸ່ມວິຊາການ, ຕິດຕາມ ແລະ ປະເມີນຜົນຜູ້ຟັງ ໃນການຈັດລາຍການວິທະຍຸ 5 ແຂວງ, ຈັດພິມປຶ້ມ ແລະ ການໂຄສະນາສຸກເສີນ.

ຈາກນັ້ນຕາງໜ້າຈາກບັນດາອົງການປະຕິບັດງານ ແລະ ຄູ່ຮ່ວມງານຕ່າງໆ ກໍ່ໄດ້ຜັດປ່ຽນກັນລາຍງານຜົນສຳເລັດໃນການປະຕິບັດວຽກງານຂອງຕົນໃນໄລຍະ ທີ່ຜ່ານມາ ແລະ ແຜນການເຄື່ອນໄຫວໃນໄຕມາດ 03, ປີ 2017 ໃນນີ້ ໄດ້ມີ ທ່ານຜູ້ຕາງໜ້າ ກົມສື່ມວນຊົນ ກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ , ທ່ານຜູ້ຕາງໜ້າ ກົມອະນຸບານ ແລະ ປະຖົມ ກະຊວງສຶກສາທິການ ແລະ ກິລາ, ທ່ານຜູ້ຕາງໜ້າວິທະຍຸແຫ່ງຊາດລາວ, ທ່ານຜູ້ຕາງໜ້າ ສູນກາງຊາວໜຸ່ມ, ທ່ານຜູ້ຕາງໜ້າອົງການນ້ຳໃຈນັກກິລາ ປະຈຳ ສປປ ລາວ, ທ່ານຜູ້ຕາງໜ້າ ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ), ທ່ານຜູ້ຕາງໜ້າອົງການສາກົນເພື່ອຄົນພິການ, ທ່ານຜູ້ຕາງໜ້າອົງການ WEL ໂຄງການສຶກສາເລື່ອງລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ, ທ່ານຜູ້ຕາງໜ້າ ອົງການ DCA, ອົງການເກັບກູ້ລະເບີດຮາໂລເທັສ (Halo-Trust), ໄດ້ລາຍງານຜົນສຳເລັດຂອງການເຄື່ອນໄຫວວຽກງານໃນໄຕມາດ 02, 2017 ແລະ ແຜນວຽກປະຈຳໄຕມາດ 03, 2017. ສ່ວນລາຍລະອຽດ ຂອງການເຄື່ອນໄຫວ ຂອງແຕ່ລະພາກສ່ວນພ້ອມດ້ວຍແຜນແມ່ນສາມາດເບິ່ງໄດ້ ໃນເອກະສານ ຊ້ອນທ້າຍ.

- ໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຫ້ອງການ ຄຊກລ ກໍ່ໄດ້ແຈ້ງກ່ຽວກັບສະຖິຕິການເກີດອຸປະຕິເຫດຈາກ ລບຕ ອຸປະຕິເຫດສ່ວນຫຼາຍແມ່ນເກີດໃນເຂດທີ່ໂຄສະນາແລ້ວ, ອຸປະຕິເຫດໃນປີ 2017 ເກີດຈາກການດັງໄຟ, ແຕ່ງກິນ, ເລີ່ມແຕ່ 1/1/2017 ຫາປະຈຸບັນ (12/5/2017) ມີອຸປະຕິເຫດຈາກ ລບຕ ເຊິ່ງມີຜູ້ເຄາະຮ້າຍ 22 ຄົນ ບາດເຈັບ 20 ຄົນ ເສຍຊີວິດ 2 ຄົນ (ເດັກຍິງ 1 ຜູ້ໃຫຍ່ຊາຍ 1) ສຳລັບເລື່ອງການຊ່ວຍເຫຼືອ ປະຈຸບັນແມ່ນມີເອກະສານອອກມາແລ້ວ ແລະ ພວກເຮົາຈະສົ່ງໃຫ້ບັນດາທ່ານພາຍຫຼັງກອງປະຊຸມນີ້.

- ໜ່ວຍງານຖານຂໍ້ມູນ ຫ້ອງການ ຄຊກລ ໄດ້ລາຍງານການ update ຖານຂໍ້ມູນແຕ່ວັນທີ 1/1/2017 ເຖິງ 9/5/2017 ແລະ ໄດ້ສະເໜີໃຫ້ແຕ່ລະພາກສ່ວນເອົາໃຈໃສ່ໃນການລາຍງານເພາະ ການລາຍງານຂໍ້ມູນເຂົ້າຖານຂໍ້ມູນແຫ່ງຊາດແມ່ນສຳຄັນຫຼາຍ ເພື່ອເປັນຫຼັກຖານ ແລະ ຢັ້ງຢືນຂໍ້ມູນໃນການຂໍທຶນນຳຜູ້ໃຫ້ທຶນ.

**ໃນກອງປະຊຸມ ຍັງໄດ້ສົນທະນາ ແລະ ປຶກສາຫາລືກັນໃນຫຼາຍຫົວຂໍ້ທີ່ໜ້າສົນໃຈ:**

1. ກົມອະນຸບານ ແລະ ປະຖົມ ກະຊວງສຶກສາທິການ ແລະ ກິລາ ສະເໜີຕໍ່ບັນດາທ່ານໃຫ້ສົມທົບກັບອຳນາດການປົກຄອງຂັ້ນເມືອງ ເພື່ອໃຫ້ເພິ່ນຊ່ວຍອີກແຮງໜຶ່ງ.

2.ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ການລົງໂຄສະນາຢູ່ບ້ານ ໃນ 9 ແຂວງ ໂຄສະນາໃຫ້ຜູ້ໃຫຍ່ ແລະ ເດັກນ້ອຍ, ຢ້ຽມຢາມຄອບຄົວ, ສາຍວີດີໂອ, ການປະເມີນຜົນ.

3. ອົງການເວີລດ໌ເອດຢູ່ເຄຊັນ ໄດ້ສະເໜີວ່າການລາຍງານເລື່ອງອຸປະຕິເຫດຜ່ານມາສັງເກດເຫັນວ່າຍັງບໍ່ທັນຄ່ອງຕົວ ສະເໜີທາງ ຄຊກລ ພິຈາລະນາຄືນກ່ຽວກັບລະບົບການລາຍງານອຸປະຕິເຫດຈາກ ລບຕ.

- ກໍລະນີພາຊ່ຽວຊານລົງບ້ານ ບໍ່ມີໜັງສືແຈ້ງຈາກກະຊວງ ເຫັນວ່າ ພະນັກງານຂັ້ນທ້ອງຖິ່ນບໍ່ໃຫ້ການຮ່ວມມື. ຕໍ່ບັນຫານີ້ ຫ້ອງການ ຄຊກລ ກໍ່ໄດ້ຊີ້ແຈງວ່າ ຄິດວ່າຊ່ຽວຊານທີ່ມາຢ້ຽມຄືຊິແມ່ນໄລຍະ WRA ມາປະເມີນເຂົາເຈົ້າມີ 2 ທີມ 1 ທີມແມ່ນປະສານຜ່ານສະຖານທູດສະຫະລັດອາເມລິກາປະຈຳລາວ, ກະຊວງການຕ່າງປະເທດ ແລະ ຄຊກລ ເຊິ່ງພວກເຮົາກໍ່ໄດ້ປະສານທ້ອງຖິ່ນໃຫ້ບໍ່ມີບັນຫາຫຍັງ ແຕ່ອີກ 1 ທີມ ແມ່ນປະສານຜ່ານ NGO ເລີຍເຊິ່ງພວກເຮົາກໍ່ບໍ່ຮູ້ຄືກັນ.

4. ອົງການນ້ຳໃຈນັກກິລາ ຈັດຝຶກອົບຮົມກິດຈະກຳຄູຝຶກບານເຕະຍິງ ແລະ ການໃຫ້ຄວາມຮູ້ເລື່ອງ ລະເບີດບໍ່ທັນແຕກ ໂດຍຜ່ານກິລາບານເຕະ ທີ່ແຂວງຊຽງຂວາງໃນລະຫວ່າງວັນທີ 24-28 ເມສາ 2017. ຈັດຝຶກອົບຮົມຢູ່ພາຍໃນ ແລະ ຕ່າງແຂວງ ໄລຍະນີ້ແມ່ນໄລຍະສະເໜີ MOU ໄລຍະໃໝ່.

5. ອົງການສາກົນເພື່ອຄົນພິການ HI ເມືອງເຊໂປນ, ນອງ, ພິນ, ວິລະບູລີ ສາຍຮຸບເງົາ, TOT Monitoring, ມີເບີສາຍດ່ວນ, ພ້ອມນີ້ສຳລັບເບີສາຍດ່ວນຍັງໂຄສະນາທາງວິທະຍຸນຳ ເປັນໄປໄດ້ບໍ່ວ່າຈະຂໍຍົກເວັ້ນຄ່າເປີດສະປອດຍ້ອນອົງການເປັນອົງການເພື່ອມະນຸດສະທຳ, ພ້ອມນີ້ຍັງສະເໜີໃຫ້ ຄຊກລ ລົງຕິດຕາມເລື້ອຍກວ່າເກົ່າ.

- ຕໍ່ບັນຫານີ້ປະທານກອງປະຊຸມກໍ່ໄດ້ຊີ້ແຈງວ່າຈະປຶກສາຫາລືກັບພາກສ່ວນກ່ຽວຂ້ອງອີກຄັ້ງໜຶ່ງ.

6 . ອົງການ Halo trust ລົງປະຊຸມໂຄສະນານຳໂຮງຮຽນ, ບ້ານໃໝ່ທີ່ຍັງບໍ່ທັນໄດ້ເຂົ້າໄປ, ບັນທຶກຂໍ້ມູນຂອງອຸປະຕິເຫດ, ລົງປະເມີນຜົນໄດ້ຮັບຂອງວຽກງານ MRE. ເມືອງເຊໂປນ ມີ 41 ບ້ານເປົ້າໝາຍເປີດບ້ານໃໝ່.

- ພົວພັນນຳໂຮງຮຽນ ແລະ ເອົາຊ່ວງໄລຍະເຂົ້າໂຮງຮຽນ ແລະ ແຈ້ງໂຮງຮຽນເຂົ້າຮ່ວມ ປໍ 1 ເຖິງ ປໍ 5 ມີແຜນໂປສເຕີ້, ແຜ່ນພັກ ເດັກນ້ອຍຍິງ - ຊາຍ ມີການຕອບຄຳຖາມ ແລະ ມີປຶ້ມ, ບິກໃຫ້.

ໃນນີ້ຕອນທ້າຍຂອງກອງປະຊຸມ ທ່ານປະທານກອງປະຊຸມໄດ້ຊີ້ນຳວ່າ:

1. ເລື່ອງການຊ່ວຍເຫຼືອຜູ້ເຄາະຮ້າຍຈາກ ລບຕ ຜ່ານມາບໍ່ກວມຫຼາຍດ້ານສະນັ້ນ ເຮົາໄດ້ຄົ້ນຄວ້າຄືນນິຕິນະໂຍບາຍປິ່ນປົວ, ຟື້ນຟູ ການປິ່ນປົວຜູ້ຖືກອຸປະຕິເຫດ ແລະ ປັບປຸງລະບົບອັດຕາກິນໃຫ້ຜູ້ດູແລ ແລະ ປັບປຸງນະໂຍບາຍ, ລົງເລິກການຄຸ້ມຄອງລາຍງານການເງິນແນວໃດສະເໜີໃຫ້ໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ສົ່ງໃຫ້ໜ່ວຍງານ MRE ເພື່ອ ສົ່ງຕໍ່ໃຫ້ບັນດາອົງການປະຕິບັດງານ.
2. ສະເໜີອົງການ Halo trust ຍັງບໍ່ເຫັນໂຕເລກງົບປະມານທີ່ໃຊ້ເຂົ້າໃນກິດຈະກຳ ແລະ ອຸປະກອນທີ່ໃຊ້ຢາກໃຫ້ອອກໃນບົດລາຍງານ.
3. ຂອດການປະສານງານໃຫ້ປະສານຫາ ຄຊກລ ໃນທ້ອງຖິ່ນ ແລະ ປະສານຫາ ຣສສ ຂັ້ນແຂວງ ສຳລັບແຂວງສະຫວັນນະເຂດ ຖ້າຢາກໄວແມ່ນສົ່ງໃຫ້ ທ່ານ ພູເຂົາ ແລະ CC ໃຫ້ໜ່ວຍງານ MRE ຫ້ອງການ ນະຄອນຫຼວງວຽງຈັນ.

4. ເລື່ອງລະບົບການລາຍງານອຸປະຕິເຫດສະເໜີໃຫ້ໜ່ວຍງານກ່ຽວຂ້ອງເບິ່ງຄືນ.
5. ໃນການລາຍງານກິດຈະກຳຄວນມີງົບປະມານກິດຈະກຳ ຖ້າສາມາດໃສ່ເງິນເດືອນໄດ້ກໍ່ຈະເປັນການດີ.
6. ສຳລັບ ການປະສານງານກັບທ້ອງຖິ່ນ ຢາກໃຫ້ເອົາໃຈໃສ່ຕື່ມ ຖ້າລະອຽດມາແຕ່ທ້ອງຖິ່ນແລ້ວ ຂັ້ນສູນກາງຂ້ອນຂ້າງບໍ່ມີບັນຫາ.
7. ສຳລັບການປະສານງານຫາພວກເຮົາແມ່ນສາມາດພົວພັນໄດ້ບໍ່ສະເພາະແຕ່ກອງປະຊຸມ.

❖ **<u>ໝາຍເຫດ</u>:** ສຳລັບລາຍລະອຽດຂອງຜົນການເຄື່ອນໄຫວປະຕິບັດກິດຈະກຳ ແລະ ສະຖິຕິການເຄື່ອນໄຫວເຮັດວຽກໃນໄຕມາດ 02, 2017 ແລະ ແຜນວຽກໃນໄຕມາດ 03, 2017 ຂອງບັນດາອົງການປະຕິບັດງານ, ທ່ານສາມາດເບິ່ງໄດ້ໃນເອກະສານຂັດຕິດ.

| **ປະທານກອງປະຊຸມ** | **ບັນທຶກກອງປະຊຸມໂດຍ:** |
|---|---|
| ບຸນພະມິດ ໂສມວິຈິດ<br>Mr.Bounphamith SOMVICHITH | Vilayphone |